ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງຈັນທະບູລີ　　　　　　　　　　　　　　　　　1044 .ລ

ຫ້ອງວ່າການປົກຄອງເມືອງຈັນທະບູລີ　　　　　　　　ເລກທີ.................../ຫວກ.ຈລ

ວັນທີ 22 Jun 2017

## ແຈ້ງການ

ເຖິງ: ບັນດາຫ້ອງການ, ພະນັກງານ, ທະຫານ, ຕຳຫຼວດ, ຫົວໜ່ວຍເສດຖະກິດ ຫ້າງຮ້ານ ແລະ ບ້ານອ້ອມຂ້າງເມືອງຈັນທະບູລີ ທີ່ນັບຖື

ເລື່ອງ:ສ້າງຂະບວນການ ອອກແຮງງານ ອານາໄມ ແລະ ລ່ອງຮ່ອງລະບາຍນ້ຳ ຮ່ອງສັກ ແ (ແຕ່ຂົວບ້ານຮ່ອງຄ້າ-ຂົວບ້ານດົງປ່າແຫຼບ)

- ອີງໃສ່ ການປະຊຸມສ່ອງປະຈຳອາທິດ ຄັ້ງວັນທີ 19 ມິຖຸນາ 2017 ເລື່ອງການສ້າງຂະບວນການອອກແຮງງານໃຫ້ເປັນຂະບວນຟົດຟື້ນ.

ເພື່ອຊົມເຊີຍບັ້ນດຳເນີນຊີວິດການເມືອງ ປັບປຸງບົວແບ່ງພັກຂັ້ນນະຄອນຫຼວງໄດ້ສຳເລັດແລະເພື່ອເປັນການຂໍານັບຮັບຕ້ອນບັ້ນດຳເນີນຊີວິດການເມືອງ ປັບປຸງບົວແບ່ງພັກຂັ້ນເມືອງຈັນທະບູລີ ທີ່ຈະເກີດຂຶ້ນໃນໄວໆນີ້

ຫ້ອງວ່າການ ເມືອງ ຈັນທະບູລີ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ຫົວໜ້າ ຫ້ອງການ, ພະນັກງານ, ທະຫານ, ຕຳຫຼວດ, ຫົວໜ່ວຍເສດຖະກິດ ຫ້າງຮ້ານ ແລະ ບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນພາຍໃນເມືອງຈັນທະບູລີ ໃຫ້ສ້າງຂະບວນການອອກແຮງງານວັນເສົາແດງໂດຍການອະນາໄມ, ເກັບສິ່ງເສດເຫຼືອ, ຕັດຫຍ້າ, ຕັດງ່າໄມ້ ແລະ ລອງຮ່ອງນ້ຳສັກ ໃນວັນເສົາ ທີ 24/6/2017 ເລີ່ມເວລາ 6:30 ໂມງເຊົ້າ ເປັນຕົ້ນໄປ.

ໂດຍມອບໃຫ້ ຄະນະພັກຜູ້ຊີ້ນຳບ້ານ, ເລຂາພັກບ້ານ, ນາຍບ້ານ ແລະ ພະນັກງານລົງກໍ່ສ້າງຮາກຖານບ້ານ, ຫ້ອງການ ຈັດຕັ້ງນຳພາໃນການອອກແຮງງານ ເຊິ່ງແຜນ ແລະ ລາຍລະອຽດແມ່ນມີຕາຕະລາງຕິດຂັດມາພ້ອມນີ້.

- ບັນດາບ້ານຮ່ອງຄ້າ, ທົ່ງຕູມ, ດົງປ່າແຫຼບ, ສະຫວ່າງ, ແມ່ນໃຫ້ປະຊາຊົນພາຍໃນບ້ານເຂົ້າຮ່ວມໝົດບ້ານ ສ່ວນບັນດາບ້ານອອ້ມຂ້າງເມືອງຈັນທະບູລີ ແມ່ນໃຫ້ເຂົ້າຮ່ວມບ້ານລະ 50ຄົນ

ດັ່ງນັ້ນ; ຈິ່ງໄດ້ແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມນີ້ດ້ວຍ

ຫົວໜ້າຫ້ອງວ່າການ ເມືອງຈັນທະບູລີ

ຫ້ອງວ່າການ

ແກ້ວປະເສີດ ໄຊປັນຍາ

Keopaseu...

ໝາຍເຫດ:

ອຸປະກອນການອອກແຮງງານແມ່ນກຸ້ມຕົນເອງ

ຕິດຕໍ່: 020 22235431, 02058805932